**ທຶນສະໜັບສະໜູນດ້ານສິລະປະຈາກ ຄະນະສິລະປະລະດັບພາກພື້ນໃນເທດສະບານເມືອງ (Arts Funding from the Metropolitan Regional Arts - MRAC)**

ຍິນດີຕ້ອນຮັບສູ່ MRAC! ພວກເຮົາມີຄວາມພາກພູມໃຈຫຼາຍທີ່ທ່ານສົນໃຈຕໍ່ບັນດາໂຄງການຂອງພວກເຮົາ. MRAC ແມ່ນອົງກອນບໍ່ຫວັງຜົນກຳໄລທີ່ປັບປຸງການເຂົ້າເຖິງດ້ານສິລະປະໃຫ້ແກ່ບັນດາຊຸມຊົນໃນເຈັດເຂດໃນປົກຄອງຂອງເມືອງທີ່

**MRAC ມີ ສີ່ (4) ໂຄງການກອງທຶນ:**

**ກອງທຶນສະໜັບສະໜູນແບບປັບປ່ຽນໄດ້**: ສູງເຖິງ $15,000 ເພື່ອສະໜັບສະໜູນສິລະປະ, ວັດທະນະທຳ ແລະ ອົງກອນທີ່ບໍ່ແມ່ນສິລະປະທີ່ບໍ່ຫວັງຜົນກຳໄລ, ແລະ ອຸປະຖຳເປັນກຸ່ມ ເພື່ອໃຫ້ເຂົາເຈົ້າເຂົ້າເຖິງເລື່ອງສິນລະປະ ແລະ ໃຊ້ ສິນລະປະດັ່ງກ່າວສະແດງໃຫ້ບັນດາຜູ້ຊົມ/ຊຸມຊົນທົ່ວ 7-ເຂດປົກຄອງໃນຂົງເຂດເທດສະບານເມືອງແຝດ. ຈຸດປະສົງຂອງໂຄງການແມ່ນຕ້ອງອອກແບບມາເພື່ອສ້າງປະໂຫຍດໃຫ້ແກ່ຊາວມິນນີໂຊຕາ. ຊຶ່ງທ່ານບໍ່ຈຳເປັນຕ້ອງມີເງິນທຶນໃນຈຳນວນທີ່ເທົ່າກັນກັບໂຄງການນີ້. ວັນທີປິດຮັບແມ່ນ ວັນທີ 9 ສິງຫາ 2021 ແລະ ວັນທີ 14 ມີນາ 2022.

**ກອງທຶນສິລະປະສຳລັບບຸກຄົນ** ໃຫ້ທຶນສູງເຖິງ $5,000 ເພື່ອສະໜັບສະໜູນໂຄງການສິລະປະໃນ 7-ເຂດປົກຄອງໃນເທດສະບານເມືອງແຝດທີ່ນຳພາໂດຍບັນດາບຸກຄົນທີ່ໄດ້ຮັບການລະບຸວ່າເປັນຊາວຜິວດຳ, ຊາວພື້ນເມືອງ ຫຼື ຊາວຜິວສີ (BIPOC); ແລະ/ຫຼື ຄົນພິການ/ບຸກຄົນທີ່ມີຄວາມພິການ (PWD) ແລະ/ຫຼື ເລສເບຽນ, ເກ, ກະເທີຍ, ຄົນປ່ຽນເພດ, ຄົນມີເພດແປກປະຫຼາດ, ຄົນມີຫຼາຍເພດ, ຄົນບໍ່ມີເພດ/ຜູ້ອາຍຸສູງ, ບຸກຄົນສອງວິນຍານ (LGBTQIA2+). ກອງທຶນຊ່ວຍເຫຼືອນີ້ຖືກອອກແບບມາເພື່ອສະໜັບສະໜູນບຸກຄົນທີ່ພະຍາຍາມນຳພາເສີມສ້າງການເຂົ້າເຖິງຜົນງານດ້ານສິລະປະໃຫ້ແກ່ຊຸມຊົນ ແລະ/ຫຼື ພົວພັນກັບຊຸມຊົນໂດຍຜ່ານຄວາມພະຍາຍາມແບບສ້າງສັນ. ແຕ່ລະໂຄງການຕ້ອງປະກອບມີອົງປະກອບທີ່ມາຈາກຊຸມຊົນ ເຊັ່ນ: ການສະແດງສູ່ສາທາລະນະຊົນ, ງານສະແດງດ້ານສິລະປະ, ກອງປະຊຸມ, ຫຼື ການສົນທະນາແບບບໍ່ເປັນທາງການ, ເຊິ່ງອົງປະກອບໃດໆກໍຕາມເຫຼົ່ານີ້ອາດນຳສະເໜີຜ່ານອອນລາຍ. ບຸກຄົນທັງໝົດຕ້ອງອາໃສຢູ່ໃນເຂດ 7-ເຂດປົກຄອງຂອງເທດສະບານເມືອງແຝດໃນໄລຍະເວລາຂອງສັນຍາສຳລັບກອງທຶນຊ່ວຍເຫຼືອລ້າ. ຊຶ່ງທ່ານບໍ່ຈຳເປັນຕ້ອງມີເງິນທຶນໃນຈຳນວນທີ່ເທົ່າກັນກັບໂຄງການນີ້. ວັນທີປິດຮັບແມ່ນ ວັນທີ 4 ຕຸລາ 2021

**ກອງທຶນບາດກ້າວຕໍ່ໄປ**, ກອງທຶນຈັດໃຫ້ໂດຍ ມູນນິທິ McKnight, ໃຫ້ກອງທຶນສູງສຸດເຖິງ $5,000 ຕໍ່ນັກສິນລະປະໜຶ່ງທ່ານທີ່ເຮັດກ່ຽວກັບວຽກສິນລະປະ. ໂຄງການເຫຼົ່ານີ້ຕ້ອງໃຫ້ກັບຄົນທີ່ຮ້ອງຂໍ ແລະ ພາໃຫ້ມີຄວາມກ້າວໜ້າ ຫຼື ຄົງຕົວໃນການຝຶກຝົນຂອງເຂົາເຈົ້າ. ຜູ້ຮ້ອງຂໍອາດສາມາດຢູ່ໃນຊ່ວງໃດກໍ່ໄດ້ສຳລັບອາຊີບນັກສິນລະປະ. ຊຶ່ງທ່ານບໍ່ຈຳເປັນຕ້ອງມີເງິນທຶນໃນຈຳນວນທີ່ເທົ່າກັນກັບໂຄງການນີ້. ວັນທີປິດຮັບແມ່ນ ວັນທີ 10 ມັງກອນ, 2022.

**ກອງທຶນສຳລັບນັກສິລະປະແບບເປັນກຸ່ມ** ໃຫ້ທຶນສູງເຖິງ $10,000 ສຳລັບກຸ່ມທີ່ນຳພາໂດຍກຸ່ມຄົນຊາວຜິວດຳ, ຊາວພື້ນເມືອງ, ຊາວຜິວສີ (BIPOC); ແລະ/ຫຼື ບຸກຄົນທີ່ມີຄວາມພິການ (PWD); ແລະ/ຫຼື ເລສເບຽນ, ເກ, ກະເທີຍ, ຄົນປ່ຽນເພດ, ຄົນມີເພດແປກປະຫຼາດ, ຄົນມີຫຼາຍເພດ, ຄົນບໍ່ມີເພດ/ຜູ້ອາຍຸສູງ, ບຸກຄົນສອງວິນຍານ (LGBTQIA2+). ກອງທຶນນີ້ຖືກອອກແບບມາສະໜັບສະໜູນຄວາມສາມາດຂອງເສີມສ້າງການເຂົ້າເຖິງຜົນງານດ້ານສິລະປະ. ກຸ່ມທັງໝົດ ແລະ ໂຄງການທັງໝົດຕ້ອງຕັ້ງຢູ່ ແລະ ດຳເນີນງານຢູ່ໃນ 7-ເຂດປົກຄອງໃນເທດສະບານເມືອງແຝດ. ເຊິ່ງທ່ານບໍ່ຈຳເປັນຕ້ອງມີເງິນທຶນໃນຈຳນວນທີ່ເທົ່າກັນກັບໂຄງການນີ້. ວັນທີປິດຮັບແມ່ນ ວັນທີ 7 ກຸມພາ, 2022.

ມີລາຍລະອຽດເພີ່ມເຕີມເປັນພາສາອັງກິດໃຫ້ທີ່ www.mrac.org. ຖ້າທ່ານຕ້ອງການເອກະສານທີ່ແປແລ້ວ ຫຼື ມີຄວາມຈຳເປັນໃນການເຂົ້າເຖິງໃດໆກໍ່ຕາມ, ພວກເຮົາຍິນດີທີ່ຈະໃຫ້ຄວາມສະດວກດັ່ງກ່າວໂດຍແຈ້ງໃຫ້ພວກເຮົາຮັບຊາບລ່ວງໜ້າສອງອາທິດ. ນອກຈາກນັ້ນທ່ານຍັງສາມາດໂອ້ລົມກັບຜູ້ອຳນວຍການໂຄງການສຳລັບຂໍ້ມູນເພີ່ມເຕີມ.

ກະລຸນາຕິດຕໍ່ພວກເຮົາທີ່ mrac@mrac.org.